# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 30 ມີນາ- 2008 ( 03-30-2008

---

## ດ້ວຍຄວາມຮັກເພື່ອອົງພຣະເຢຊູ:

**ຂໍ້ພຣະຄັມພີໃນບົດຮຽນ:** (ພຣະນິມິດ 1:9-13, 17-18; 3:14-22)

**ຄໍາຖາມແຫ່ງຊີວິດ:** ເປັນຫຍັງຈຶ່ງຄວນເປັນທີ່ຕື່ນເຕັ້ນຍິນດີໃນການທີ່ເປັນຜູ້ຮູ້ ແລະຕິດຕາມພຣະເຢຊູຄຣິດ?

**ຄວາມຈິງໃນພຣະຄັມພີ:** ພຣະເຢຊູພຣະຜູ້ຄືນພຣະຊົນຊີບຖືຂໍກຸນແຈທີ່ຈະໄດ້ໄຂໄປສູ່ການມີຊັຍຊະນະໃນການດໍາລົງຊີວິດ, ດັ່ງນັ້ນພຣະອົງຈຶ່ງຊົງໃຫ້ຄວາມອົບອຸ່ນແກ່ຜູ້ເຊື່ອທັງຫລາຍໃຫ້ມີກໍາລັງຕໍ່ສູ້ກັບຄວາມພຽງພໍຂອງຕົນທີ່ກໍາລັງເຕີບໂຕຂື້ນ ແລະປ່ຽນເປັນຈິດວິນຍານທີ່ບໍ່ຮ້ອນຮົນ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ຂຽນຂື້ນມາເພື່ອຊ່ອຍທ່ານໃຫ້ດໍາລົງຊີວິດແຕ່ລະວັນກັບພຣະເຈົ້າຢ່າງໝັ້ນຄົງ ແລະດ້ວຍຄວາມຫວັງທີ່ພຣະເຈົ້າໄດ້ຊົງປະທານໃຫ້ໂດຍ:

- ຍອມຮັບໃນຫລັກຖານຂອງຄວາມພຽງພໍທາງຈິດວິນຍານ ແລະການເມີນເສີຍທີ່ມັນກໍ່ຕົວຂື້ນໃນຕົວຂອງເຮົາ
- ການສໍານຶກຜິດຂອງທຸກຈິດໃຈທີ່ເຫັນແກ່ຕົວ ແລະຄວາມຮູ້ສຶກເສີຍເມີຍທີ່ທ່ານມີ.

### ການຈັດຕຽມຂອງຄຣູ:

1. ອະທິຖານຂໍການຊົງນໍາຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ່ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ.
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນໍາໄປສອນ
4. ອ່ານ "<u>ແຜນການສອນ</u>", ໝາຍບ່ອນສໍາຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສໍາເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈໍານວນນັກຮຽນ.

### ແຜນການສອນ:

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ.
2. ສໍາຣວດຈໍານວນນັກຮຽນ ຖາມຂ່າວຫາຜູ້ທີ່ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ.
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຽັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈໍາ.
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄໍາພຍານສັ້ນໆ.
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ.

**ແນະນໍາ:**

- ໃຫ້ຜູ້ນຶ່ງສມັກເປັນຜູ້ປຽບທຽບເພື່ອໃຫ້ເຫັນແຈ້ງເຖິງຜູ້ທີ່ເປັນອັຄສາວົກທີ່ມີການຝຶກອົບຮົມກັບອັຄສາວົກຜູ້ທີ່ຂາດການອົບຮົມວ່າມີຄວາມແຕກຕ່າງກັນຢ່າງໃດ. ສົນທະນາກັນເຣື່ອງ ໂຄງການ ແລະເປັນແນວໃດບາງຄົນຈຶ່ງເຮັດຕາມທີ່ເຂົ້າເຊື່ອຖືໄດ້. ເຂົາໄດ້ເອົາໃຈໃສ່ ແລະສູ້ທົນ ທໍາສັນຍາກັບທີມກິລາ ຫລືເວລາຫວ່າງຫລາຍກວ່າທີ່ເຂົາມີເວລາມາຫາພຣະເຢຊູ ແລະມາວິຫານຂອງພຣະອົງ. ເປັນຫຍັງບັນດາຜູ້ທີ່ເຊື່ອຈຶ່ງສົມຄວນເປັນຜູ້ທີ່ກະຕືລືລົ້ນເຣື່ອງການຮູ້ຈັກ ແລະຕິດຕາມພຣະເຢຊູ?

- **ການດຳຣົງຊີວິດ 3:16 ໃນໂລກ 9/11 ຕາມທີ່ຜູ້ທີ່ເຊື່ອທັງຫລາຍເວົ້າວ່າ ພວກເຮົາເຮັດທຸກສິ່ງທີ່ເຮົາສາ** ມາດເຮັດໄດ້ ໃຫ້ປະກາດຂ່າວປະເສີດ ແລະໃຫ້ຄົນອື່ນເຫັນຊີວິດແຫ່ງຊັຍຊະນະ ເຂົາສາມາດປະສົບການກັບ ພຣະເຢຊູຄຣິດໄດ້.

## 1. <u>ພຣະເຢຊູຊົງຢູ່ກັບເຮົາເຖິງແມ່ນວ່າຈະຢູ່ໃນຄວາມຍາກລຳບາກ:</u> ( ພຣະນິມິດ 1:9-11)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະນິມິດ 1:9-11
- ແມ່ນຫຍັງທີ່ຂໍ້ພຣະທັມໄດ້ເປີດເຜີຍເລື່ອງຂອງໂຢຮັນ, ອ່ານໂຢຮັນ 1:35 ( ເບິ່ງຄືວ່າມີອັຄສາວົກຜູ້ນຶ່ງໃນຈຳນວນສອງຄົນທີ່ໃຫ້ການ); ບົດທີ13:23-26; 18:15-16; 20:2-10; 21:2; ແລະ 21:20-23.
- ອະທິບາຍ ໂຢຮັນໄດ້ພົບປະສົບການອັນຫຍຸ້ງຍາກຢ່າງຮ້າຍແຮງ ຄັ້ງນຶ່ງເກືອບຈະປະລະການເປັນອັຄສາ ວົກຂອງພຣະເຢຊູ. ໂຢຮັນໄດ້ຖືກເນຣະເທດໄປຢູ່ເກາະປັດໂມ. ພວກຣັຖບານໄດ້ກະທຳຊົ່ວຮ້າຍເພາະໂຢຮັນ ເປັນຜູ້ທີ່ທົນທຸກເພື່ອພຣະຄຣິດ. ເຂົາຈຶ່ງໄດ້ເນຣະເທດໂຢຮັນອອກໄປຈາກປະເທດ ແລະຫ້າມບໍ່ໃຫ້ເວົ້າເຣື່ອງ ພຣະເຢຊູ, ແຕ່ເຂົາກໍບໍ່ສາມາດຫ້າມລາວໄດ້ ແລະກໍບໍ່ສາມາດທີ່ຈະຫ້າມໂຢຮັນໃຫ້ຂຽນຈົດໝາຍເຣື່ອງພຣະ ຄຳຂອງພຣະເຈົ້າໄປຫາໂບດຕ່າງ ໆ ໄດ້ເລີຍ.
- ສົນທະນາກັນວ່າ: ຈະຮູ້ໄດ້ຢ່າງໃດວ່າ ພຣະເຢຊູຊົງສະຖິດຢູ່ນຳພວກເຮົາໃນເວລາພົບກັບຄວາມມຫຍຸ້ງຍາກ ສັບສົນ. ໃຫ້ນັກຮຽນແບ່ງປັນປະສົບການຂອງຕົນວ່າພຣະເຢຊູໄດ້ຊົງສະຖິດຢູ່ນຳໃນການດຳຣົງຊີວິດອັນ ຫຍຸ້ງຍາກສັບສົນຂອງຕົນ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> ພຣະນິມິດ 1:9-11

1. ແມ່ນຫຍັງທີ່ແຕກຕ່າງລະຫວ່າງຄົນຜູ້ທີ່ພຍາຍາມຕໍ່ສູ້ເພື່ອໃຫ້ດີຂຶ້ນຫລາຍ ໆ ແລະຄົນຜູ້ທີ່ວ່າເຮັດຊໍ່ານີ້ພໍແລ້ວ?
2. ແມ່ນຫຍັງທີ່ເປັນອັນຕະລາຍຂອງຄວາມເສີຍເມີຍໃນຊີວິດຄຣິສຕຽນ?
3. ແມ່ນຫຍັງເປັນສິ່ງທີ່ໜ້າປະທັບໃຈເຣື່ອງພິດຕິກັມ ແລະສິ່ງທີ່ໂຢຮັນໄດ້ຮັບແຕ່ລະມື້ແຕ່ລະວັນ?
4. ທ່ານຄິດວ່າເປັນດ້ວຍເຫດໃດໂຢຮັນຈຶ່ງຖືກຮຽກເອີ້ນໃຫ້ເປັນອັຄສາວົກໃຫ້ບອກເຖິງເຣື່ອງພຣະນິມິດຈາກພຣະ ເຈົ້າ?

## 2. <u>ພຣະເຢຊູເປັນພຣະຜູ້ເປັນເຈົ້າເໜືອຄວາມເປັນ ແລະຄວາມຕາຍ :</u> (ພຣະນິມິດ 1:12-13, 17-18)

- ຂໍໃຫ້ນັກຮຽນອາສາສມັກອ່ານພຣະທັມ ພຣະນິມິດ 1:12-13, 17-18. ເຄື່ອງຮອງຕີນໂຄມ 7 ອັນ ໝາຍເຖິງ 7 ຄຣິສຕະຈັກໃນພຣະນິມິດ. ອ່ານພຣະທັມມັດທາຍ 5:14-16 ສົນທະນາລັກສະນະສະເພາະຂອງໂບດໃນສມັຍນີ້ທີ່ເປັນໂຄມໄຟ ຫລືເປັນແສງສວ່າງສ່ອງໄປສູ່ໂລກ.
- ຊີ້ໃຫ້ພວກເຮົາເຫັນວ່າ ໃນຄວາມຄິດຂອງໂຢຮັນນັ້ນເຕັມໄປດ້ວຍຂໍ້ຄວາມ ແລະພາບພົດໃນພຣະຄັມພີເດີມ

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> ພຣະນິມິດ 1:12-13, 17-18

1. ໃນພຣະທັມນີ້ໄດ້ຊ່ອຍທ່ານໃຫ້ທ່ານມີຄວາມພາກພູມຊາບຊຶ້ງໃຈຈິດໃຈຢ່າງໃດ?
2. ຂໍ້ພຣະທັມເຫລົ່ານີ້ໄດ້ເຕືອນທ່ານວ່າ: ພຣະເຢຊູຊົງເປັນພຣະຜູ້ເປັນເຈົ້າເໜືອຊີວິດ ແລະເໜືອຄວາມຕາຍຢ່າງໃດ?
3. ເມື່ອໃດທີ່ທ່ານມີຄວາມຮູ້ສຶກວ່າພຣະເຢຊູຊົງເດ່ພຣະຫັດກ້ຳຂວາຂອງພຣະອົງແຕະຕ້ອງທ່ານ? ໃນຄວາມສະດວກສະບາຍບໍ່? ໃນການປົກປ້ອງຄຸ້ມຄອງບໍ່?

4. ພຣະເຢຊູໄດ້ຊົງເປີດເຜີຍຢ່າງໃດວ່າພຣະອົງຊົງເປັນພຣະຜູ້ເປັນເຈົ້າເໜືອຊີວິດ ແລະເໜືອຄວາມຕາຍຂອງທ່ານ?

**3. <u>ພຣະເຢຊູປະຕິເສດຈິດວິນຍານທີ່ບໍ່ໃສ່ໃຈຕໍ່ສິ່ງໃດ ໆ:</u>** (ພຣະນິມິດ 3:14-17)

- ໃຫ້ນັກຮຽນອາສາສມັກອ່ານ ພຣະນິມິດ 3:14-17
- ໃຫ້ນັກຮຽນຂີດກ້ອງໃນບົດຮຽນທີ່ເປັນສິ່ງທີ່ພຣະເຢຊູໃຊ້ສຳລັບພຣະອົງເອງ.
- ທົບທວນຄືນວ່າ ແມ່ນຫຍັງທີ່ພຣະເຢຊູຊົງເວົ້າຄຣິສຕະຈັກນີ້ເປັນພຽງແຕ່ອຸ່ນ ໆ.
  ອັນຕະລາຍຂອງຈິດວິນຍານ ທີ່ເສີຍຊ້າຕໍ່ຄຣິສຕະຈັກ ແລະຕົນເອງນັ້ນເປັນຢ່າງໃດ?
- ຂຽນ "ຮ້ອນ" ແລະ "ອຸ່ນ ໆ "ໃສ່ກະດານ ແລ້ວໃຫ້ນັກຮຽນບັນລະຍາຍລັກສະນະຂອງໂບດທີ່ ຮ້ອນຮົນ ແລະ ຂຽນຄຳຕອບຂອງເຂົາເຈົ້າໃສ່ໃນກະດານ, ແລ້ວກໍບັນລະຍານເຣື່ອງໂບດທີ່ພຽງແຕ່ອຸ່ນ ໆ, ແລ້ວຂຽນຄຳ ຕອບໃສ່ກະດານ ແລະເອົາມາປຽບທຽບໃສ່ກັນວ່າໂບດປະເພດໃດດີ.
- ຄຳຖາມ: ເປັນດ້ວຍເຫດໃດຜູ້ທີ່ເຊື່ອທັງຫລາຍຈຶ່ງຕ້ອງສຳຣວດເບິ່ງສະພາບຈິດວິນຍານຂອງຕົນ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u>** ພຣະນິມິດ 3:14-17

1. ບັນດາຜູ້ທີ່ເຊື່ອໃນຄຣິສຕະຈັກລາວດີເກອາເຫັນຕົນເອງວ່າເປັນແນວໃດ?
2. ພຣະເຢຊູເຫັນຄຣິສຕະຈັກລາວດີເກອາວ່າເປັນແນວໃດ?
3. ທ່ານຈະສາມາດເວົ້າວ່າຄຣິສຕະຈັກຂອງທ່ານເຂັ້ມແຂງ ແລະອ່ອນແອໄດ້ຢ່າງໃດ?

**4. <u>ພຣະເຢຊູຈະປະທານຄວາມໃກ້ຊິດໃຫ້ກັບຜູ້ຕິດຕາມພຣະອົງ:</u>** (ພຣະນິມິດ3:18-22)

- ໃຫ້ນັກຮຽນອາສາສມັກອ່ານ ພຣະນິມິດ 3:18-22

ຖາມ: ຖ້າຫາກພຣະເຢຊູຊົງນຳພາໂບດຂອງທ່ານໂດຍກົງພຣະອົງຈະສົມຄວນໄດ້ຮັບການສັຣເສີນບໍ່?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u>** ພຣະນິມິດ 3:18-22

1. ພຣະເຢຊູໄດ້ຊົງທ້າທາຍຄຣິສຕະຈັກລາວດີເກອາຢ່າງໃດໃນພຣະທັມຕອນນີ້?
2. ພຣະເຢຊູໃຫ້ໄຂປະຕູຫຍັງທີ່ທາງໜ້າໂບດຂອງທ່ານ?
3. ແມ່ນຫຍັງທີ່ເປັນສິ່ງກີດຂວາງຜູ້ທີ່ເຊື່ອໃຫ້ອອກຈາກການສນິດສນົມ ການນະມັສການຮ່ວມກັບພຣະພຣະເຢຊູ?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ</u>

- ພຣະເຢຊູຊົງຢູ່ກັບໄພ່ພົນຂອງພຣະອົງຕລອດ, ທັງ ໆ ທີ່ເວລາມີຄວາມທຸກລຳບາກ.
- ເພາະວ່າ ພຣະອົງໄດ້ຊັຍຊະນະຄວາມຕາຍດ້ວຍການຄືນພຣະຊົນ, ບັນດາຜູ້ທີ່ເຊື່ອຄວນຈະດຳຣົງຊີວິດດ້ວຍ ຄວາມລຳບາກເພື່ອພຣະອົງ.
- ພຣະເຢຊູຊົງຮູ້ຈັກ ແລະຈະປະຕິເສດຜູ້ທີ່ມີຈິດໃຈເສີຍເມີຍ.
- ພຣະເຢຊູຊົງຊັກຊວນໃຫ້ຄຣິສຕຽນສາຣະພາບ ສຳນຶກຜິດ ແລະເດີນກັບພຣະອົງ ຢູ່ໃກ້ຊິດພຣະອົງ, ນະມັສ ການຮ່ວມກັບພຣະອົງ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ. www.lsbf.org. by JH